ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ 206 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 03 ສິງຫາ 2018

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ທະນາຄານ ແຫ່ງ ສປປ ລາວ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 088/ສພຊ, ລົງວັນທີ 19 ມິຖຸນາ 2018 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ທະນາຄານ ແຫ່ງ ສປປ ລາວ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 08/ຄປຈ, ລົງວັນທີ 17 ກໍລະກົດ 2018.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ທະນາຄານ ແຫ່ງ ສປປ ລາວ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 088 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 19/06/18

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ (ສະບັບປັບປຸງ) ໃນວາລະກອງປະຊຸມ ຄັ້ງວັນທີ 19 ມິຖຸນາ 2018.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີ ເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ | ເລກທີ 47 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 19 ມິຖຸນາ 2018

# ກົດໝາຍ
# ວ່າດ້ວຍທະນາຄານແຫ່ງ
# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ໃໝ່) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອເຮັດໃຫ້ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນສະຖຽນລະພາບທາງດ້ານເງິນຕາ, ຄວາມໝັ້ນຄົງຂອງສະຖາບັນການເງິນ ແລະ ລະບົບການຊຳລະໃຫ້ມີຄວາມຄ່ອງຕົວ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 (ໃໝ່) ທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຽນຫຍໍ້ວ່າ "ທຫລ" ແມ່ນ ທະນາຄານກາງຂອງປະເທດ ຊຶ່ງຄຸ້ມຄອງມະຫາພາກທາງດ້ານເງິນຕາ, ຄຸ້ມຄອງສະຖາບັນການເງິນ ແລະ ລະບົບການຊຳລະ.

**ມາດຕາ 3 (ໃໝ່) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສະຖາບັນການເງິນ** ໝາຍເຖິງ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ ແລະ ສະຖາບັນການເງິນອື່ນ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງ ຂອງທະນາຄານແຫ່ງ ສປປ ລາວ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

2. **ສະຖາບັນການເງິນຈຸລະພາກ** ໝາຍເຖິງ ສະຖາບັນການເງິນ ທີ່ດຳເນີນທຸລະກິດການເງິນຈຸລະພາກ ທີ່ຖືກສ້າງຕັ້ງຂຶ້ນ ຕາມລະບຽບການທີ່ກ່ຽວຂ້ອງ ຊຶ່ງປະກອບດ້ວຍສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ແລະ ໂຄງການການເງິນຈຸລະພາກ;

3. **ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ** ໝາຍເຖິງ ສະຖາບັນການເງິນທີ່ລະດົມເງິນຝາກທົ່ວໄປຈາກມວນຊົນ, ປ່ອຍເງິນກູ້ຈຸລະພາກ ແລະ ໃຫ້ບໍລິການທາງດ້ານການເງິນຈຸລະພາກອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ;

4. **ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ** ໝາຍເຖິງ ສະຖາບັນການເງິນທີ່ໃຫ້ປ່ອຍກູ້ຈຸລະພາກ ແລະ ລະດົມທຶນໃນຮູບແບບໃຫ້ກູ້ຢືມ ຫຼື ຊ່ວຍເຫຼືອລ້າ ຈາກພາຍໃນ ແລະ ຕ່າງປະເທດ;

5. **ໂຄງການການເງິນຈຸລະພາກ** ໝາຍເຖິງ ກອງທຶນພັດທະນາບ້ານ, ທະນາຄານບ້ານ ຫຼື ກອງທຶນອື່ນ ທີ່ສ້າງຕັ້ງຂຶ້ນ ໂດຍກຸ່ມປະຊາຊົນ, ນິຕິບຸກຄົນ ຊຶ່ງມີການຈັດຕັ້ງ ຫຼື ບຸກຄົນເປັນຜູ້ໃຫ້ທຶນ ທີ່ເຄື່ອນໄຫວທຸລະກຳການເງິນຈຸລະພາກ ເຊັ່ນ ລະດົມເງິນຝາກ ແລະ ປ່ອຍເງິນກູ້;

6. **ທະນະບັດ** ໝາຍເຖິງ ເງິນໃນຮູບແບບຂອງໃບເຈ້ຍ ຫຼື ປຣາສຕິກ;

7. **ເງິນຫຼຽນ** ໝາຍເຖິງ ເງິນໃນຮູບແບບຂອງໂລຫະ;

8. **ເອກະສານມີຄ່າ** ໝາຍເຖິງ ໜັງສືຢັ້ງຢືນພັນທະໃນການຊຳລະໜີ້ ລະຫວ່າງຜູ້ຈຳໜ່າຍ ກັບຜູ້ຖືຄອງເອກະສານມີຄ່າ ໂດຍມີການກຳນົດເງື່ອນໄຂດ້ານໄລຍະເວລາ, ດອກເບ້ຍ ແລະ ເງື່ອນໄຂອື່ນໆ. ເອກະສານມີຄ່າປະກອບມີພັນທະບັດປະເພດຕ່າງໆ, ໃບຢັ້ງຢືນເງິນຝາກ, ແຊັກ ແລະ ເຄື່ອງມືຊຳລະອື່ນໆ;

9. **ນິຕິບຸກຄົນ** ໝາຍເຖິງ ການຈັດຕັ້ງ ທີ່ມີຊື່ສະເພາະ, ມີຊັບສິນບັດ ເປັນຂອງຕົນເອງ, ສາມາດຄຸ້ມຄອງບໍລິຫານ ດ້ວຍຕົນເອງ, ສາມາດເຄື່ອນໄຫວວຽກງານໃນນາມຂອງຕົນ ຕາມລະບຽບການສະເພາະ ແລະ ສາມາດເປັນໂຈດ ຫຼື ຈຳເລີຍໄດ້.

**ມາດຕາ 4 (ໃໝ່) ນະໂຍບາຍຂອງລັດກ່ຽວກັບທະນາຄານແຫ່ງ ສປປ ລາວ**

ລັດ ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກໃນດ້ານຕ່າງໆໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ເພື່ອໃຫ້ການຄຸ້ມຄອງມະຫາພາກທາງດ້ານເງິນຕາ, ຄຸ້ມຄອງສະຖາບັນການເງິນ ແລະ ລະບົບການຊຳລະ ເຂັ້ມແຂງ ແລະ ທັນສະໄໝ ດ້ວຍການກຳນົດຍຸດທະສາດ, ກໍ່ສ້າງໂຄງລ່າງພື້ນຖານ, ສ້າງ, ບຳລຸງ ບຸກຄະລາກອນ ແລະ ປະກອບວັດຖຸປະກອນ ຕາມຄວາມເໝາະສົມ.

ລັດ ຊຸກຍູ້, ສົ່ງເສີມ ແລະ ປຸກລະດົມ ໃຫ້ທົ່ວສັງຄົມ ປະກອບສ່ວນ ແລະ ໃຫ້ການຮ່ວມມືໃນການເຄື່ອນໄຫວວຽກງານ ຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 5 (ໃໝ່) ຫຼັກການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ເຄື່ອນໄຫວວຽກງານ ຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

2. ຮັບປະກັນການລວມສູນ ແລະ ເປັນເອກະພາບ;

3. ຮັບປະກັນຄວາມປອດໄພ ແລະ ຄວາມໂປ່ງໃສ;

4. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ.

ມາດຕາ 6 (ໃໝ່) ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຂອງທະນາຄານແຫ່ງ ສປປ ລາວ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກວິຊາການ, ເຕັກໂນໂລຊີ, ການຄົ້ນຄວ້າວິທະຍາສາດ, ການພັດທະນາຊັບພະຍາກອນມະນຸດ ແລະ ປະຕິບັດຕາມ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່

ມາດຕາ 7 (ປັບປຸງ) ທີ່ຕັ້ງ

ທະນາຄານແຫ່ງ ສປປ ລາວ ແມ່ນ ອົງການລັດທຽບເທົ່າກະຊວງ ຊຶ່ງສັງກັດໃນໂຄງປະກອບກົງຈັກຂອງລັດຖະບານ, ມີຖານະເປັນນິຕິບຸກຄົນ ແລະ ມີສໍານັກງານໃຫຍ່ຕັ້ງຢູ່ນະຄອນຫຼວງວຽງຈັນ.

ມາດຕາ 8 (ປັບປຸງ) ພາລະບົດບາດ

ທະນາຄານແຫ່ງ ສປປ ລາວ ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກທາງດ້ານເງິນຕາ ໃຫ້ມີສະຖຽນລະພາບ, ຄຸ້ມຄອງສະຖາບັນການເງິນ ໃຫ້ມີຄວາມໝັ້ນຄົງ ແລະ ຄຸ້ມຄອງລະບົບການຊໍາລະ ໃຫ້ມີປະສິດທິພາບ ເພື່ອຊຸກຍູ້ການພັດທະນາເສດຖະກິດ-ສັງຄົມຂອງຊາດ.

ມາດຕາ 9 (ປັບປຸງ) ສິດ

ທະນາຄານແຫ່ງ ສປປ ລາວ ມີສິດ ດັ່ງນີ້:

1. ອອກ ແລະ ຍົກເລີກ ນິຕິກໍາ ໃນຂອບເຂດສິດຂອງຕົນ;
2. ພິມ, ຖອນ ທະນະບັດ ແລະ ເງິນຫຼຽນ ແຕ່ພຽງຜູ້ດຽວ ຕາມການອະນຸມັດຂອງລັດຖະບານ;
3. ອອກ ແລະ ຈໍາໜ່າຍພັນທະບັດຂອງທະນາຄານແຫ່ງ ສປປ ລາວ ເພື່ອປະຕິບັດນະໂຍບາຍເງິນຕາ;
4. ໃຫ້ກູ້ຢືມເປັນແຫຼ່ງສຸດທ້າຍ ແກ່ສະຖາບັນການເງິນ ເພື່ອຮັບປະກັນສະພາບຄ່ອງຂອງສະຖາບັນການເງິນ ແລະ ການປະຕິບັດນະໂຍບາຍເງິນຕາ;
5. ອອກ, ຖອນ ໃບອະນຸຍາດດໍາເນີນທຸລະກິດ ການເງິນ, ການທະນາຄານ, ການບໍລິການຊໍາລະ ແລະ ເງິນຕາຕ່າງປະເທດ ຫຼື ໂຈະຊົ່ວຄາວການດໍາເນີນທຸລະກິດດັ່ງກ່າວ;
6. ນໍາໃຊ້ມາດຕະການຕໍ່ສະຖາບັນການເງິນ ທີ່ລະເມີດກົດໝາຍ ແລະ ລະບຽບການ;
7. ທວງເອົາຂໍ້ມູນນໍາບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອປະຕິບັດໜ້າທີ່ຂອງຕົນ;

8. ສະເໜີລັດຖະບານ ພິຈາລະນາອະນຸຍາດສ້າງຕັ້ງ ຫຼື ຍຸບເລີກ ສາຂາທະນາຄານແຫ່ງ ສປປ ລາວ ຢູ່ພາຍໃນປະເທດ ແລະ ຫ້ອງການຜູ້ຕາງໜ້າທະນາຄານແຫ່ງ ສປປ ລາວ ຢູ່ຕ່າງປະເທດ;

9. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 10 (ປັບປຸງ) ໜ້າທີ່

ທະນາຄານແຫ່ງ ສປປ ລາວ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ ແລະ ຍຸດທະສາດ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ ແລະ ຍຸດທະສາດ ເປັນແຜນງານ, ແຜນການ ແລະ ໂຄງການລະອຽດ ຂອງທະນາຄານແຫ່ງ ສປປ ລາວ ແລະ ຈັດຕັ້ງປະຕິບັດ;

3. ສ້າງ ແລະ ປັບປຸງ ກົດໝາຍ, ລັດຖະບັນຍັດ ແລະ ດໍາລັດ ເພື່ອສະເໜີລັດຖະບານ ພິຈາລະນາ;

4. ໂຄສະນາເຜີຍແຜ່ບັນດານິຕິກໍາ ໃນຂົງເຂດທະນາຄານ ໃຫ້ສັງຄົມຮັບຮູ້ຢ່າງກວ້າງຂວາງ;

5. ປະຕິບັດນະໂຍບາຍເງິນຕາ ດ້ວຍການນໍາໃຊ້ເຄື່ອງມືນະໂຍບາຍເງິນຕາ ໃຫ້ສອດຄ່ອງກັບສະພາບການໃນແຕ່ລະໄລຍະ;

6. ຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

7. ຮັກສາ ແລະ ຄຸ້ມຄອງ ຄັງສໍາຮອງເງິນຕາຕ່າງປະເທດ;

8. ຄຸ້ມຄອງ ແລະ ຕິດຕາມ ກວດກາ ການເຄື່ອນໄຫວວຽກງານຂອງສະຖາບັນການເງິນ;

9. ຄຸ້ມຄອງ ແລະ ຕິດຕາມກວດກາ ເຄື່ອງມື, ລະບົບກົນໄກການຊໍາລະ ໃຫ້ມີຄວາມປອດໄພ;

10. ເປີດບັນຊີເງິນຝາກຂອງຕົນ ແລະ ຂອງລັດຖະບານ ນໍາທະນາຄານກາງຂອງຕ່າງປະເທດ, ອົງການຈັດຕັ້ງການເງິນສາກົນ ແລະ ສະຖາບັນການເງິນຕ່າງປະເທດ;

11. ຮັບເປີດບັນຊີເງິນຝາກໃຫ້ແກ່ລັດຖະບານ, ສະຖາບັນການເງິນ ແລະ ອົງການຈັດຕັ້ງສາກົນ;

12. ຈັດຕັ້ງການຈໍາໜ່າຍ, ການຊື້ ຂາຍ ແລະ ຫັກບັນຊີ ພັນທະບັດຂອງລັດຖະບານ ຫຼື ພັນທະບັດທີ່ລັດຖະບານເປັນຜູ້ຄໍ້າປະກັນ ຕາມລະບຽບການທີ່ກ່ຽວຂ້ອງ;

13. ຄົ້ນຄວ້າປະກອບຄໍາເຫັນໃຫ້ແກ່ລັດຖະບານ ໃນການກູ້ຢືມເປັນເງິນຕາຕ່າງປະເທດ ຢູ່ພາຍໃນ ແລະ ຕ່າງປະເທດ;

14. ສັງລວມ ແລະ ວິໄຈຂໍ້ມູນ ຂ່າວສານທາງດ້ານເສດຖະກິດ, ການເງິນ, ເງິນຕາ ແລະ ການເຄື່ອນໄຫວຂອງສະຖາບັນການເງິນ ທັງພາຍໃນ ແລະ ຕ່າງປະເທດ;

15. ເປັນຕົວແທນໃຫ້ລັດຖະບານ ຢູ່ໃນອົງການຈັດຕັ້ງການເງິນສາກົນ, ພົວພັນ, ຮ່ວມມື ແລະ ເຊັນສັນຍາກ່ຽວກັບວຽກງານການເງິນ, ເງິນຕາ ກັບຕ່າງປະເທດ ແລະ ອົງການຈັດຕັ້ງການເງິນສາກົນ ຕາມການມອບໝາຍ ຂອງລັດຖະບານ;

16. ສ້າງ, ປັບປຸງ, ຄຸ້ມຄອງ ແລະ ພັດທະນາ ລະບົບບັນຊີ ຂອງທະນາຄານແຫ່ງ ສປປ ລາວ ແລະ ສະຖາບັນການເງິນ;

17. ຮ່ວມມື ແລະ ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານມີຄວາມກົມກຽວກັນ;

18. ລາຍງານກ່ຽວກັບການເຄື່ອນໄຫວວຽກງານຂອງຕົນ ແລະ ບາງບັນຫາພົ້ນເດັ່ນທາງດ້ານເສດຖະກິດ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

19. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 11 (ໃໝ່) ໂຄງປະກອບການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ມີໂຄງປະກອບການຈັດຕັ້ງ ດັ່ງນີ້:

1. ສະພາບໍລິຫານ;
2. ຄະນະກຳມະການ;
3. ຜູ້ວ່າການ ແລະ ຮອງຜູ້ວ່າການ;
4. ກົງຈັກຊ່ວຍວຽກ ແລະ ພະນັກງານ.

### ໝວດທີ 1
### ສະພາບໍລິຫານ

**ມາດຕາ 12 (ປັບປຸງ) ສະພາບໍລິຫານ**

ສະພາບໍລິຫານ ແມ່ນ ການຈັດຕັ້ງບໍລິຫານສູງສຸດ ຂອງທະນາຄານແຫ່ງ ສປປ ລາວ.

ສະມາຊິກສະພາບໍລິຫານ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຜູ້ວ່າການ.

ສະພາບໍລິຫານ ມີອາຍຸການ ຫ້າ ປີ. ສະມາຊິກສະພາບໍລິຫານ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

**ມາດຕາ 13 (ປັບປຸງ) ໂຄງປະກອບຂອງສະພາບໍລິຫານ**

ສະພາບໍລິຫານ ປະກອບດ້ວຍສະມາຊິກ ແຕ່ ເຈັດ ຫາ ສິບເອັດ ຄົນ ໃນນັ້ນມີ:

1. ຜູ້ວ່າການ ເປັນປະທານ;
2. ຮອງລັດຖະມົນຕີກະຊວງການເງິນ ເປັນຮອງປະທານ;
3. ຮອງຜູ້ວ່າການ ເປັນຮອງປະທານ;
4. ຕົວແທນຈາກພາກສ່ວນອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ຂົງເຂດເສດຖະກິດ ແລະ ສະຖາບັນການສຶກສາ ເປັນກຳມະການ.

ມາດຕາ 14 (ປັບປຸງ) ເງື່ອນໄຂ ແລະ ມາດຕະຖານ ຂອງສະມາຊິກສະພາບໍລິຫານ

ສະມາຊິກສະພາບໍລິຫານ ມີເງື່ອນໄຂ ແລະ ມາດຕະຖານ ຕົ້ນຕໍ ດັ່ງນີ້:

1. ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດ, ມີບົດຮຽນ ແລະ ໄດ້ຮັບຄວາມເຊື່ອຖື ຈາກວົງການການເງິນ, ເງິນຕາ ແລະ ຂະແໜງວິຊາສະເພາະອື່ນທີ່ກ່ຽວຂ້ອງ;

2. ບໍ່ເປັນສະມາຊິກຂອງສະພາບໍລິຫານ ຫຼື ຜູ້ອໍານວຍການຂອງສະຖາບັນການເງິນໃດໜຶ່ງ;

3. ຜົວ ຫຼື ເມຍ, ພໍ່, ແມ່, ລູກ ບໍ່ແມ່ນຜູ້ຖືຮຸ້ນລາຍໃຫຍ່ ຫຼື ຜູ້ມີສິດຜົນປະໂຫຍດສໍາຄັນໃນສະຖາບັນການເງິນໃດໜຶ່ງ;

4. ບໍ່ເຄີຍເປັນຜູ້ບໍລິຫານຂອງວິສາຫະກິດທີ່ຖືກລົ້ມລະລາຍ;

5. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານ ລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ສໍ້ລາດບັງຫຼວງ, ຟອກເງິນ ຫຼື ການກະທໍາຜິດອື່ນ ໂດຍເຈດຕະນາ.

ມາດຕາ 15 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ

ສະພາບໍລິຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງແຜນເງິນຕາແຫ່ງຊາດ ຕາມການສະເໜີຂອງຄະນະກໍາມະການນະໂຍບາຍເງິນຕາ ເພື່ອສະເໜີລັດຖະບານ ພິຈາລະນາ ແລ້ວສະເໜີສະພາແຫ່ງຊາດ ຮັບຮອງ;

2. ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານປະຈໍາປີ ແລະ ແຜນການເຄື່ອນໄຫວວຽກງານໃນປີຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ;

3. ຮັບຮອງນະໂຍບາຍ ດອກເບ້ຍ ແລະ ອັດຕາແລກປ່ຽນ;

4. ຮັບຮອງເອົາບົດສະຫຼຸບການປະຕິບັດແຜນລາຍຮັບ, ລາຍຈ່າຍ ປະຈໍາປີ ແລະ ແຜນລາຍຮັບ, ລາຍຈ່າຍ ປີຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ ເພື່ອນໍາສະເໜີນາຍົກລັດຖະມົນຕີ ພິຈາລະນາອະນຸມັດ;

5. ບໍລິຫານ ແລະ ຈັດແບ່ງຜົນໄດ້ຮັບສຸດທິປະຈໍາປີ ຕາມການສະເໜີຂອງຜູ້ວ່າການ;

6. ພິຈາລະນາຮັບຮອງໂຄງປະກອບກົງຈັກຂັ້ນກົມ, ທຽບເທົ່າກົມ, ສາຂາທະນາຄານແຫ່ງ ສປປ ລາວ ຢູ່ພາຍໃນປະເທດ ແລະ ຫ້ອງການຜູ້ຕາງໜ້າທະນາຄານແຫ່ງ ສປປ ລາວ ຢູ່ຕ່າງປະເທດ ລວມທັງແຜນການປະກອບບຸກຄະລາກອນຂອງທະນາຄານແຫ່ງ ສປປ ລາວ;

7. ແຕ່ງຕັ້ງ ແລະ ປົດຕໍາແໜ່ງ ຄະນະກໍາມະການກວດກາ ແລະ ຄະນະກໍາມະການອື່ນ ຕາມການສະເໜີຂອງຜູ້ວ່າການ;

8. ຮັບຮອງເອົາການກໍານົດເງິນເດືອນ, ເງິນແຮງງານ, ນະໂຍບາຍອຸດໜູນ ແລະ ສະຫວັດດີການອື່ນ ຂອງພະນັກງານທະນາຄານແຫ່ງ ສປປ ລາວ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 16 (ປັບປຸງ) ກອງປະຊຸມສະພາບໍລິຫານ

ສະພາບໍລິຫານ ເຄື່ອນໄຫວວຽກງານຕາມລະບອບປະຊຸມ. ກອງປະຊຸມສະພາບໍລິຫານ ປະກອບດ້ວຍກອງປະຊຸມສາມັນ ແລະ ວິສາມັນ.

ກອງປະຊຸມສາມັນ ຈັດຂຶ້ນ ສາມເດືອນ ຕໍ່ຄັ້ງ ຕາມການຮຽກໂຮມຂອງປະທານ. ວາລະກອງປະຊຸມ ຕ້ອງແຈ້ງໃຫ້ສະມາຊິກສະພາບໍລິຫານລ່ວງໜ້າ ເປັນລາຍລັກອັກສອນ ຢ່າງໜ້ອຍ ເຈັດວັນ ກ່ອນວັນເປີດກອງປະຊຸມ. ກອງປະຊຸມສະພາບໍລິຫານ ຈະສາມາດເປີດຂຶ້ນໄດ້ ກໍຕໍ່ເມື່ອມີສະມາຊິກສະພາບໍລິຫານເຂົ້າຮ່ວມ ຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກທັງໝົດ.

ກອງປະຊຸມວິສາມັນ ສາມາດຈັດຂຶ້ນເວລາໃດກໍໄດ້ ຕາມຄວາມຈຳເປັນຂອງວຽກງານ ໂດຍການຮຽກໂຮມຂອງປະທານ ຫຼື ຕາມການສະເໜີຂອງສະມາຊິກສະພາບໍລິຫານ ຢ່າງໜ້ອຍ ສອງຄົນ.

ກອງປະຊຸມສະພາບໍລິຫານ ຕົກລົງບັນຫາ ໂດຍຖືເອົາສຽງສ່ວນຫຼາຍຂອງສະມາຊິກທີ່ເຂົ້າຮ່ວມກອງປະຊຸມ. ກໍລະນີຫາກມີສຽງເທົ່າກັນ ສຽງຂອງປະທານເປັນອັນຕັດສິນ.

**ມາດຕາ 17 (ປັບປຸງ) ການສິ້ນສຸດການເປັນສະມາຊິກສະພາບໍລິຫານ**

ສະມາຊິກສະພາບໍລິຫານ ຈະສິ້ນສຸດລົງ ໃນກໍລະນີ ດັ່ງນີ້:

1. ໝົດອາຍຸການ;
2. ລາອອກ ໂດຍໄດ້ຮັບອະນຸຍາດຈາກນາຍົກລັດຖະມົນຕີ;
3. ຖືກຍົກຍ້າຍ, ປົດຕຳແໜ່ງ ຫຼື ບໍ່ໄດ້ຮັບຜິດຊອບວຽກງານທີ່ກ່ຽວຂ້ອງ;
4. ຖືກສານຕັດສິນລົງໂທດຕັດອິດສະລະພາບ;
5. ເສຍຊີວິດ.

ໃນກໍລະນີຈຳນວນສະມາຊິກສະພາບໍລິຫານ ຫາກວ່າງລົງ ຕາມກໍລະນີທີ່ໄດ້ກຳນົດໄວ້ໃນຂໍ້ 2 ຫາ ຂໍ້ 5 ຂອງມາດຕານີ້ ຜູ້ວ່າການ ຕ້ອງສະເໜີນາຍົກລັດຖະມົນຕີແຕ່ງຕັ້ງຜູ້ໃໝ່ແທນ ເພື່ອສືບຕໍ່ໜ້າທີ່ຕາມອາຍຸການຂອງສະພາບໍລິຫານທີ່ຍັງເຫຼືອ.

## ໝວດທີ 2
## ຄະນະກຳມະການ

**ມາດຕາ 18 (ໃໝ່) ຄະນະກຳມະການ**

ທະນາຄານແຫ່ງ ສປປ ລາວ ປະກອບມີ ຄະນະກຳມະການ ດັ່ງນີ້:

1. ຄະນະກຳມະການນະໂຍບາຍເງິນຕາ;
2. ຄະນະກຳມະການກວດກາ;
3. ຄະນະກຳມະການອື່ນ ຕາມຄວາມຈຳເປັນຂອງວຽກງານ.

**ມາດຕາ 19 (ໃໝ່) ຄະນະກຳມະການນະໂຍບາຍເງິນຕາ**

ຄະນະກຳມະການນະໂຍບາຍເງິນຕາ ແມ່ນ ໂຄງປະກອບກົງຈັກໜຶ່ງຂອງທະນາຄານແຫ່ງ ສປປ ລາວ ປະກອບດ້ວຍ ສະມາຊິກ ຢ່າງໜ້ອຍ ເຈັດຄົນ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີ

ຂອງຜູ້ວ່າການ. ຄະນະກຳມະການນະໂຍບາຍເງິນຕາ ມີອາຍຸການ ຫ້າປີ. ສະມາຊິກຂອງຄະນະກຳມະການນະໂຍບາຍເງິນຕາ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

ຄະນະກຳມະການນະໂຍບາຍເງິນຕາ ເຄື່ອນໄຫວວຽກງານຕາມລະບອບປະຊຸມ ຊຶ່ງຈັດຂຶ້ນ ສອງເດືອນ ຕໍ່ຄັ້ງ. ໃນກໍລະນີຈຳເປັນຮີບດ່ວນ ສາມາດຈັດກອງປະຊຸມໄດ້ທຸກເວລາ.

**ມາດຕາ 20 (ໃໝ່) ໂຄງປະກອບຂອງຄະນະກຳມະການນະໂຍບາຍເງິນຕາ**

ຄະນະກຳມະການນະໂຍບາຍເງິນຕາ ປະກອບດ້ວຍ:

1. ຜູ້ວ່າການ ເປັນປະທານ;
2. ຮອງຜູ້ວ່າການ ເປັນຮອງປະທານ;
3. ຮອງລັດຖະມົນຕີກະຊວງການເງິນ ເປັນຮອງປະທານ;
4. ກຳມະການຈຳນວນໜຶ່ງ ທີ່ມາຈາກທະນາຄານແຫ່ງ ສປປ ລາວ, ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 21 (ໃໝ່) ເງື່ອນໄຂ ແລະ ມາດຕະຖານ ຂອງຄະນະກຳມະການນະໂຍບາຍເງິນຕາ**

ຄະນະກຳມະການນະໂຍບາຍເງິນຕາ ມີເງື່ອນໄຂ ແລະ ມາດຕະຖານ ຕົ້ນຕໍ ດັ່ງນີ້:

1. ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດ ແລະ ບົດຮຽນ ໃນຂົງເຂດເສດຖະກິດ, ການເງິນ, ເງິນຕາ;
2. ບໍ່ເຄີຍເປັນຜູ້ບໍລິຫານ ຂອງວິສາຫະກິດທີ່ລົ້ມລະລາຍ;
3. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານ ລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ສໍ້ລາດບັງຫຼວງ, ຟອກເງິນ ຫຼື ການກະທຳຜິດອື່ນ ໂດຍເຈດຕະນາ.

**ມາດຕາ 22 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະກຳມະການນະໂຍບາຍເງິນຕາ**

ຄະນະກຳມະການນະໂຍບາຍເງິນຕາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າແຜນເງິນຕາແຫ່ງຊາດ ເພື່ອສະເໜີຕໍ່ສະພາບໍລິຫານພິຈາລະນາ;
2. ຄົ້ນຄວ້ານະໂຍບາຍເງິນຕາ ເພື່ອສະເໜີຕໍ່ສະພາບໍລິຫານພິຈາລະນາຮັບຮອງ;
3. ຕິດຕາມ, ກວດກາ ແລະ ປະເມີນ ການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ຂອງທະນາຄານແຫ່ງ ສປປ ລາວ;
4. ຄົ້ນຄວ້າມີຄຳເຫັນຕໍ່ການສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍເງິນຕາ;
5. ເຂົ້າຮ່ວມ ແລະ ລາຍງານຜົນການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ຕໍ່ກອງປະຊຸມສະພາບໍລິຫານ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງສະພາບໍລິຫານ.

**ມາດຕາ 23 (ໃໝ່) ຄະນະກຳມະການກວດກາ**

ຄະນະກຳມະການກວດກາ ແມ່ນ ໂຄງປະກອບກົງຈັກໜຶ່ງຂອງທະນາຄານແຫ່ງ ສປປ ລາວ ປະກອບດ້ວຍສະມາຊິກ ຢ່າງໜ້ອຍ ຫ້າ ຄົນ ຊຶ່ງຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍສະພາບໍລິຫານ ຕາມການສະເໜີຂອງຜູ້ວ່າການ.

ຄະນະກຳມະການກວດກາ ມີອາຍຸການ ຫ້າປີ. ສະມາຊິກຂອງຄະນະກຳມະການກວດກາ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

ຄະນະກຳມະການກວດກາ ເຄື່ອນໄຫວວຽກງານຂອງຕົນຕາມລະບອບປະຊຸມ ຊຶ່ງຈັດຂຶ້ນ ສາມ ເດືອນ ຕໍ່ຄັ້ງ. ໃນກໍລະນີຈຳເປັນຮີບດ່ວນ ສາມາດຈັດກອງປະຊຸມໄດ້ທຸກເວລາ.

ໃນກໍລະນີຈຳເປັນນາຍົກລັດຖະມົນຕີ ອາດແຕ່ງຕັ້ງ ຄະນະກຳມະການກວດກາ ກໍໄດ້.

**ມາດຕາ 24 (ໃໝ່) ໂຄງປະກອບຄະນະກຳມະການກວດກາ**

ຄະນະກຳມະການກວດກາ ປະກອບດ້ວຍ:

1. ສະມາຊິກສະພາບໍລິຫານຈາກພາກສ່ວນອື່ນ ເປັນປະທານ;
2. ຮອງຜູ້ອຳນວຍການ ທີ່ຮັບຜິດຊອບວຽກງານກວດກາ ເປັນຮອງປະທານ;
3. ກຳມະການຈຳນວນໜຶ່ງ ທີ່ມາຈາກທະນາຄານແຫ່ງ ສປປ ລາວ ແລະ/ຫຼື ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 25 (ໃໝ່) ເງື່ອນໄຂ ແລະ ມາດຕະຖານ ຂອງຄະນະກຳມະການກວດກາ**

ຄະນະກຳມະການກວດກາ ມີເງື່ອນໄຂ ແລະ ມາດຕະຖານ ຕົ້ນຕໍ ດັ່ງນີ້:

1. ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດ ແລະ ປະສົບການ ໃນຂົງເຂດ ການເງິນ, ການບັນຊີ ແລະ ຂົງເຂດອື່ນກ່ຽວກັບການກວດກາ;
2. ມີທັດສະນະໜັກໜ່ວງ, ປອດໃສ ແລະ ຍຸຕິທຳ;
3. ຮັກສາຄວາມລັບກ່ຽວກັບວຽກງານກວດກາ;
4. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານ ລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ສໍ້ລາດບັງຫຼວງ, ຟອກເງິນ ຫຼື ການກະທຳຜິດອື່ນ ໂດຍເຈດຕະນາ.

**ມາດຕາ 26 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະກຳມະການກວດກາ**

ຄະນະກຳມະການກວດກາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ;
2. ກວດກາຄວາມຖືກຕ້ອງຂອງເອກະສານລາຍງານການເງິນ;
3. ກວດກາປະສິດທິຜົນຂອງການດຳເນີນງານ;
4. ກວດກາການຈັດຕັ້ງປະຕິບັດວຽກງານກວດກາພາຍໃນ ຂອງທະນາຄານແຫ່ງ ສປປ ລາວ;
5. ເຂົ້າຮ່ວມ ແລະ ລາຍງານຜົນການກວດກາ ຕໍ່ກອງປະຊຸມສະພາບໍລິຫານ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງສະພາບໍລິຫານ.

## ໝວດທີ 3
## ຜູ້ວ່າການ ແລະ ຮອງຜູ້ວ່າການ

**ມາດຕາ 27 (ປັບປຸງ) ຜູ້ວ່າການ**

ຜູ້ວ່າການ ເປັນສະມາຊິກລັດຖະບານ, ເປັນຜູ້ຊີ້ນຳ, ນຳພາບໍລິຫານວຽກງານຮອບດ້ານພາຍໃນທະນາຄານແຫ່ງ ສປປ ລາວ ທັງເປັນຜູ້ຕາງໜ້າ ຂອງທະນາຄານແຫ່ງ ສປປ ລາວ ໃນການພົວພັນວຽກງານພາຍໃນ ແລະ ຕ່າງປະເທດ.

ຜູ້ວ່າການ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍປະທານປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ ພາຍຫຼັງສະພາແຫ່ງຊາດຮັບຮອງ.

**ມາດຕາ 28 (ປັບປຸງ) ສິດ ແລະ ໜ້າທີ່ຂອງຜູ້ວ່າການ**

ຜູ້ວ່າການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບຕໍ່ສະພາບໍລິຫານ ແລະ ລັດຖະບານ ກ່ຽວກັບວຽກງານເງິນຕາ ແລະ ສະຖາບັນການເງິນ;
2. ສະເໜີແຜນເງິນຕາແຫ່ງຊາດ ໃຫ້ແກ່ລັດຖະບານ ເພື່ອສະເໜີສະພາແຫ່ງຊາດ ພິຈາລະນາຮັບຮອງ;
3. ນຳໃຊ້ເຄື່ອງມືນະໂຍບາຍເງິນຕາ ທີ່ເໝາະສົມກັບສະພາບເສດຖະກິດ ໃນແຕ່ລະໄລຍະ;
4. ອະນຸມັດຈຳນວນທະນະບັດ ແລະ ເງິນຫຼຽນ ທີ່ຈະພິມຈຳໜ່າຍ, ຖອນ ແລະ ທຳລາຍ ໃນແຕ່ລະປີ;
5. ສະເໜີສ້າງ ແລະ ປັບປຸງກົດໝາຍ, ລັດຖະບັນຍັດ ແລະ ດຳລັດ ກ່ຽວກັບວຽກງານຂອງຂະແໜງການທະນາຄານ ຕໍ່ລັດຖະບານ;
6. ອອກ, ປັບປຸງ ແລະ ຍົກເລີກ ນິຕິກຳ ຕາມຂອບເຂດສິດຂອງຕົນ;
7. ອອກ, ຖອນ ໃບອະນຸຍາດດຳເນີນທຸລະກິດ ການເງິນ, ການທະນາຄານ, ການບໍລິການຊຳລະ ແລະ ເງິນຕາຕ່າງປະເທດ ຫຼື ໂຈະຊົ່ວຄາວການດຳເນີນທຸລະກິດດັ່ງກ່າວ;
8. ສະເໜີສະພາບໍລິຫານພິຈາລະນາຮັບຮອງໂຄງປະກອບກົງຈັກຂັ້ນກົມ, ທຽບເທົ່າກົມ, ສາຂາທະນາຄານແຫ່ງ ສປປ ລາວ ຢູ່ພາຍໃນປະເທດ ແລະ ຫ້ອງການຜູ້ຕາງໜ້າທະນາຄານແຫ່ງ ສປປ ລາວ ຢູ່ຕ່າງປະເທດ ລວມທັງແຜນການປະກອບບຸກຄະລາກອນຂອງທະນາຄານແຫ່ງ ສປປ ລາວ;
9. ອະນຸຍາດການສ້າງຕັ້ງ ແລະ ປັບປຸງ ກົງຈັກການຈັດຕັ້ງຂັ້ນພະແນກ ແລະ ທຽບເທົ່າພະແນກ ລົງມາ;
10. ສະເໜີນາຍົກລັດຖະມົນຕີ ແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງ ຮອງຜູ້ວ່າການ, ຫົວໜ້າກົມ ແລະ ທຽບເທົ່າຫົວໜ້າກົມ;
11. ແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງຮອງຫົວໜ້າກົມ, ທຽບເທົ່າຮອງຫົວໜ້າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ລົງມາ ພ້ອມທັງບັນຈຸພະນັກງານວິຊາການຂອງທະນາຄານແຫ່ງ ສປປ ລາວ;
12. ຮ່ວມມື ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານທະນາຄານ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 29 (ໃໝ່) ຮອງຜູ້ວ່າການ**

ທະນາຄານແຫ່ງ ສປປ ລາວ ປະກອບມີ ຮອງຜູ້ວ່າການ ຈຳນວນໜຶ່ງ ຊຶ່ງຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຜູ້ວ່າການ.

ຮອງຜູ້ວ່າການ ມີໜ້າທີ່ຊ່ວຍຜູ້ວ່າການໃນການຊີ້ນຳ ແລະ ນຳພາລົງເລິກວຽກງານຈຳນວນໜຶ່ງ ຕາມການມອບໝາຍຂອງຜູ້ວ່າການ ທັງເປັນຜູ້ຮັກສາການແທນ ໃນກໍລະນີທີ່ຜູ້ວ່າການ ຕິດຂັດ ແລະ ບໍ່ສາມາດມາປະຈຳການໄດ້ ຕາມການມອບໝາຍຂອງຜູ້ວ່າການ.

## ໝວດທີ 4
## ກົງຈັກຊ່ວຍວຽກ ແລະ ພະນັກງານ

**ມາດຕາ 30 (ໃໝ່) ກົງຈັກຊ່ວຍວຽກ**

ທະນາຄານແຫ່ງ ສປປ ລາວ ປະກອບມີ ກົມ, ທຽບເທົ່າກົມ ຢູ່ຂັ້ນສູນກາງ, ສາຂາທະນາຄານແຫ່ງ ສປປ ລາວ ຢູ່ຂັ້ນທ້ອງຖິ່ນ ແລະ ຫ້ອງການຜູ້ຕາງໜ້າທະນາຄານແຫ່ງ ສປປ ລາວ ຢູ່ຕ່າງປະເທດ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 31 (ໃໝ່) ພະນັກງານຂອງທະນາຄານແຫ່ງ ສປປ ລາວ**

ພະນັກງານຂອງທະນາຄານແຫ່ງ ສປປ ລາວ ມີຖານະເປັນພະນັກງານ-ລັດຖະກອນ, ເຄື່ອນໄຫວວຽກງານ, ປະຕິບັດສິດ, ໜ້າທີ່, ພັນທະ ແລະ ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ແລະ ລະບຽບການທີ່ກ່ຽວຂ້ອງ.

# ພາກທີ IV
# ການເຄື່ອນໄຫວວຽກງານ
## ໝວດທີ 1
## ເງິນຕາແຫ່ງຊາດ

**ມາດຕາ 32 (ປັບປຸງ) ຫົວໜ່ວຍເງິນຕາຂອງ ສປປ ລາວ**

ເງິນຕາຂອງ ສປປ ລາວ ແມ່ນ ເງິນກີບ ມີຫົວໜ່ວຍເປັນກີບ ແລະ ອັດ ໜຶ່ງກີບແບ່ງອອກເປັນຮ້ອຍອັດ.

**ມາດຕາ 33 (ປັບປຸງ) ການພິມທະນະບັດ ແລະ ຫຼໍ່ເງິນຫຼຽນ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ອອກແບບ, ກຳນົດສ່ວນປະກອບ, ຮູບພາບ ແລະ ປະເພດທະນະບັດ ແລະ ເງິນຫຼຽນ ເພື່ອສະເໜີລັດຖະບານພິຈາລະນາອະນຸມັດ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ພິມທະນະບັດ ແລະ ຫຼໍ່ເງິນຫຼຽນ ແຕ່ພຽງຜູ້ດຽວ. ທະນະບັດແຕ່ລະໃບ ແລະ ເງິນຫຼຽນແຕ່ລະອັນ ຕ້ອງກຳນົດມູນຄ່າຢ່າງຈະແຈ້ງ.

ທະນາຄານແຫ່ງ ສປປ ລາວ ຕ້ອງຮັບປະກັນຄວາມປອດໄພ ຂອງໂຮງພິມ, ສາງ, ແມ່ພິມທະນະບັດ, ເບົ້າຫຼໍ່ເງິນຫຼຽນ, ປໍ້ເລກລະຫັດ ແລະ ອຸປະກອນອື່ນ ທີ່ຮັບໃຊ້ການພິມທະນະບັດ ແລະ ຫຼໍ່ເງິນຫຼຽນ ພ້ອມທັງຮັກສາທະນະບັດ ແລະ ເງິນຫຼຽນ ທີ່ຍັງບໍ່ທັນໄດ້ພິມຈຳໜ່າຍ ສູ່ຂອດຈໍລະຈອນ.

**ມາດຕາ 34 (ໃໝ່) ການພິມທະນະບັດ ແລະ ຫຼໍ່ຫຼຽນ ທີ່ລະນຶກ**

ທະນາຄານແຫ່ງ ສປປ ລາວ ສາມາດພິມທະນະບັດ ແລະ ຫຼໍ່ຫຼຽນ ທີ່ລະນຶກ ເນື່ອງໃນໂອກາດການສະເຫຼີມສະຫຼອງວັນສຳຄັນທາງດ້ານການເມືອງ, ປະຫວັດສາດ, ວິທະຍາສາດ, ວັດທະນະທຳ-ສັງຄົມ ຫຼື ເຫດການສຳຄັນຂອງຊາດ ແລະ ສາກົນ ຕາມການອະນຸມັດຂອງລັດຖະບານ.

ທະນາຄານແຫ່ງ ສປປ ລາວ ສາມາດຈຳໜ່າຍ ທະນະບັດ ຫຼື ຫຼຽນທີ່ລະນຶກດ້ວຍຕົນເອງ ຫຼື ມອບໃຫ້ການຈັດຕັ້ງ ຫຼື ນິຕິບຸກຄົນໃດໜຶ່ງ ຈຳໜ່າຍແທນ.

**ມາດຕາ 35 (ໃໝ່) ການພິມຈຳໜ່າຍທະນະບັດ ແລະ ເງິນຫຼຽນ**

ການພິມຈຳໜ່າຍທະນະບັດ ແລະ ເງິນຫຼຽນ ແມ່ນການນຳເອົາທະນະບັດ ແລະ ເງິນຫຼຽນ ທີ່ໄດ້ພິມແລ້ວອອກສູ່ຂອດຈໍລະຈອນ.

ທະນະບັດ ແລະ ເງິນຫຼຽນ ທີ່ທະນາຄານແຫ່ງ ສປປ ລາວ ພິມຈຳໜ່າຍສູ່ຂອດຈໍລະຈອນ ແມ່ນຖືກຕ້ອງຕາມກົດໝາຍ ແລະ ມີຄວາມສາມາດຊື້ ໃນຂອບເຂດທົ່ວປະເທດ.

**ມາດຕາ 36 (ປັບປຸງ) ການຖອນທະນະບັດ ແລະ ເງິນຫຼຽນ ຄືນຈາກການຈໍລະຈອນ**

ທະນາຄານແຫ່ງ ສປປ ລາວ ສາມາດຖອນທະນະບັດ ແລະ ເງິນຫຼຽນ ຄືນຈາກການຈໍລະຈອນ ໂດຍໄດ້ຮັບການເຫັນດີຈາກລັດຖະບານ. ການຖອນທະນະບັດ ແລະ ເງິນຫຼຽນນັ້ນ ຕ້ອງແຈ້ງໃຫ້ມວນຊົນຊາບ. ຜູ້ທີ່ມີທະນະບັດ ແລະ ເງິນຫຼຽນທີ່ຖືກປະກາດຖອນຄືນຈາກການຈໍລະຈອນນັ້ນ ມີສິດປ່ຽນເອົາທະນະບັດ ແລະ ເງິນຫຼຽນ ນຳທະນາຄານແຫ່ງ ສປປ ລາວ ຫຼື ທະນາຄານທຸລະກິດ ຕາມມູນຄ່າຂອງທະນະບັດ ແລະ ເງິນຫຼຽນ ທີ່ຕົນຖືຄອງ. ໃນການປ່ຽນທະນະບັດ ແລະ ເງິນຫຼຽນນີ້ ບໍ່ໃຫ້ເກັບຄ່າບໍລິການ.

**ມາດຕາ 37 (ປັບປຸງ) ການແລກປ່ຽນທະນະບັດ ແລະ ເງິນຫຼຽນ ເສື່ອມຄຸນນະພາບ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດມາດຕະຖານ ແລະ ເງື່ອນໄຂການແລກປ່ຽນ ທະນະບັດ ແລະ ເງິນຫຼຽນ ເສື່ອມຄຸນນະພາບ ເຊັ່ນ ຖືກເຈາະ, ຖືກຕັດ, ແຕກ, ຫັກ, ມີຮອຍຂີດຂຽນ, ບໍ່ມີຄຸນລັກສະນະຂອງເງິນ ຫຼື ມີຮູບພາບທີ່ບໍ່ສາມາດຈຳແນກໄດ້.

ການປ່ຽນທະນະບັດ ແລະ ເງິນຫຼຽນ ເສື່ອມຄຸນນະພາບ ສາມາດດຳເນີນຜ່ານທະນາຄານແຫ່ງ ສປປ ລາວ ຫຼື ທະນາຄານທຸລະກິດ. ເງື່ອນໄຂຂອງການປ່ຽນທະນະບັດ ແລະ ເງິນຫຼຽນ ຕ້ອງປະກາດໃຫ້ມວນຊົນຊາບ.

ມາດຕາ 38 (ໃໝ່) ການທຳລາຍທະນະບັດ ແລະ ເງິນຫຼຽນ

ທະນາຄານແຫ່ງ ສປປ ລາວ ເປັນຜູ້ທຳລາຍທະນະບັດ ແລະ ເງິນຫຼຽນ ທີ່ໄດ້ຖອນຄືນຈາກການຈໍລະຈອນ ແລະ ເສື່ອມຄຸນນະພາບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 36 ແລະ 37 ຂອງກົດໝາຍສະບັບນີ້.

ຂັ້ນຕອນ ແລະ ວິທີການ ທຳລາຍທະນະບັດ ແລະ ເງິນຫຼຽນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ການປະຕິບັດນະໂຍບາຍເງິນຕາ

ມາດຕາ 39 (ໃໝ່) ນະໂຍບາຍເງິນຕາ

ນະໂຍບາຍເງິນຕາ ແມ່ນ ການຄວບຄຸມປະລິມານເງິນ ດ້ວຍການນຳໃຊ້ເຄື່ອງມືນະໂຍບາຍເງິນຕາທີ່ເໝາະສົມ ເພື່ອຮັກສາສະຖຽນລະພາບທາງດ້ານລາຄາ.

ມາດຕາ 40 (ໃໝ່) ເຄື່ອງມືນະໂຍບາຍເງິນຕາ

ເຄື່ອງມືນະໂຍບາຍເງິນຕາ ປະກອບດ້ວຍ:

1. ອັດຕາດອກເບ້ຍ;
2. ເງິນແຮຝາກບັງຄັບ;
3. ອັດຕາແລກປ່ຽນ;
4. ການດຳເນີນຕະຫຼາດເປີດ;
5. ການສະໜອງທຶນ;
6. ເຄື່ອງມືອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດກົນໄກ ແລະ ລະບຽບການ ໃນການນຳໃຊ້ເຄື່ອງມືນະໂຍບາຍເງິນຕາແຕ່ລະປະເພດ.

ມາດຕາ 41 (ປັບປຸງ) ອັດຕາດອກເບ້ຍ

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດ ແລະ ປະກາດໃຊ້ ອັດຕາດອກເບ້ຍພື້ນຖານ, ອັດຕາດອກເບ້ຍສະໜອງທຶນ ແລະ ອັດຕາດອກເບ້ຍເງິນກູ້ລະຫວ່າງທະນາຄານ ເພື່ອຈັດຕັ້ງປະຕິບັດນະໂຍບາຍເງິນຕາ. ສ່ວນການກຳນົດອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ ຂອງສະຖາບັນການເງິນ ແກ່ລູກຄ້າທົ່ວໄປນັ້ນ ໃຫ້ປະຕິບັດຕາມກົນໄກເສດຖະກິດຕະຫຼາດ ທີ່ມີການຄຸ້ມຄອງຂອງລັດ.

ມາດຕາ 42 (ປັບປຸງ) ເງິນແຮຝາກບັງຄັບ

ເງິນແຮຝາກບັງຄັບ ແມ່ນ ຈຳນວນເງິນທີ່ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຮັບເງິນຝາກ ຕ້ອງຝາກໄວ້ຢູ່ທະນາຄານແຫ່ງ ສປປ ລາວ ຕາມອັດຕາສ່ວນເງິນແຮຝາກບັງຄັບ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດແຕ່ລະໄລຍະ.

**ມາດຕາ 43 (ໃໝ່) ອັດຕາແລກປ່ຽນ**

ອັດຕາແລກປ່ຽນ ລະຫວ່າງສະກຸນເງິນກີບ ກັບ ເງິນຕາຕ່າງປະເທດ ແມ່ນກຳນົດບົນພື້ນຖານການສະໜອງ ແລະ ຄວາມຕ້ອງການເງິນຕາຕ່າງປະເທດ ຂອງປະເທດ ທີ່ມີການຄຸ້ມຄອງຂອງລັດ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດ ລະບອບ ແລະ ກົນໄກການຄຸ້ມຄອງອັດຕາແລກປ່ຽນ.

**ມາດຕາ 44 (ໃໝ່) ການດຳເນີນຕະຫຼາດເປີດ**

ຕະຫຼາດເປີດ ແມ່ນ ຕະຫຼາດ ຊື້ ຂາຍ ເອກະສານມີຄ່າ ລະຫວ່າງທະນາຄານແຫ່ງ ສປປ ລາວ ແລະ ສະຖາບັນການເງິນ ເພື່ອຄຸ້ມຄອງປະລິມານເງິນ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຈັດຕັ້ງ, ດຳເນີນ ແລະ ຄຸ້ມຄອງການເຄື່ອນໄຫວຂອງຕະຫຼາດເປີດ ລວມທັງກຳນົດປະເພດເອກະສານມີຄ່າ ທີ່ສາມາດຊື້ ຂາຍ ໃນຕະຫຼາດ ແລະ ດຳເນີນການຊື້ ຂາຍ ໃນຕະຫຼາດຮ່ວມກັບສະມາຊິກຂອງຕະຫຼາດເປີດ.

**ມາດຕາ 45 (ໃໝ່) ການສະໜອງທຶນ**

ທະນາຄານແຫ່ງ ສປປ ລາວ ສາມາດສະໜອງທຶນດ້ວຍການໃຫ້ກູ້ຢືມ ແກ່ສະຖາບັນການເງິນ ຊຶ່ງມີ ສອງຮູບການ ດັ່ງນີ້:

1. ການໃຫ້ກູ້ຢືມທີ່ບໍ່ມີຫຼັກຊັບຄ້ຳປະກັນ ນຳໃຊ້ເພື່ອຮັບປະກັນການຊຳລະລະຫວ່າງສະຖາບັນການເງິນດ້ວຍກັນ;

2. ການໃຫ້ກູ້ຢືມທີ່ມີຫຼັກຊັບຄ້ຳປະກັນ ນຳໃຊ້ເພື່ອສະໜອງໃຫ້ສະຖາບັນການເງິນ ແນໃສ່ຮັບປະກັນການແກ້ໄຂການຂາດສະພາບຄ່ອງ.

**ມາດຕາ 46 (ໃໝ່) ການກູ້ຢືມ**

ທະນາຄານແຫ່ງ ສປປ ລາວ ສາມາດກູ້ຢືມເປັນເງິນຕາຕ່າງປະເທດ ເພື່ອຈຸດປະສົງຮັກສາສະຖຽນລະພາບເງິນຕາແຫ່ງຊາດ ຕາມການເຫັນດີຂອງລັດຖະບານ.

**ມາດຕາ 47 (ໃໝ່) ການໃຫ້ກູ້ຢືມແກ່ສະຖາບັນການເງິນ**

ທະນາຄານແຫ່ງ ສປປ ລາວ ສາມາດໃຫ້ກູ້ຢືມແກ່ສະຖາບັນການເງິນ ທີ່ພົບຄວາມຫຍຸ້ງຍາກທາງດ້ານການເງິນ ແລະ ຂາດຄວາມໝັ້ນຄົງ ທີ່ອາດສົ່ງຜົນກະທົບຕໍ່ຄວາມໝັ້ນຄົງຂອງລະບົບສະຖາບັນການເງິນ, ເງິນຕາ.

ນອກຈາກທີ່ໄດ້ກຳນົດໄວ້ເທິງນີ້ ທະນາຄານແຫ່ງ ສປປ ລາວ ສາມາດໃຫ້ກູ້ຢືມແກ່ສະຖາບັນການເງິນ ໃນກໍລະນີອື່ນ ຕາມການເຫັນດີຂອງລັດຖະບານ.

**ມາດຕາ 48 (ປັບປຸງ) ການຄ້ຳປະກັນ**

ທະນາຄານແຫ່ງ ສປປ ລາວ ສາມາດຄ້ຳປະກັນໃຫ້ແກ່ສະຖາບັນການເງິນ ໃນການກູ້ຢືມຈາກຕ່າງປະເທດ ຕາມການເຫັນດີຂອງລັດຖະບານ.

ເງື່ອນໄຂ, ຂັ້ນຕອນ ແລະ ວິທີການ ຄ້ຳປະກັນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 49 (ປັບປຸງ) ການໃຫ້ກູ້ຢືມແກ່ລັດຖະບານ**

ທະນາຄານແຫ່ງ ສປປ ລາວ ສາມາດໃຫ້ກູ້ຢືມແກ່ລັດຖະບານ ເພື່ອແກ້ໄຂການຂາດດຸນງົບປະມານໄລຍະສັ້ນ ຕາມການເຫັນດີຂອງນາຍົກລັດຖະມົນຕີ ໃນວົງເງິນບໍ່ເກີນ ຊາວ ສ່ວນຮ້ອຍ ຂອງລາຍຮັບງົບປະມານແຫ່ງລັດປະຈຳປີ ແລະ ສອດຄ່ອງກັບອັດຕາສ່ວນຂອງໜີ້ສາທາລະນະ ທີ່ສະພາແຫ່ງຊາດໄດ້ຮັບຮອງ.

ການໃຫ້ກູ້ຢືມດັ່ງກ່າວ ລັດຖະບານຕ້ອງຊຳລະຄືນທັງຕົ້ນທຶນ ແລະ ດອກເບ້ຍ ພາຍໃນປີງົບປະມານທີ່ກູ້ຢືມ.

**ມາດຕາ 50 (ປັບປຸງ) ຄັງສຳຮອງເງິນຕາຕ່າງປະເທດ**

ຄັງສຳຮອງເງິນຕາຕ່າງປະເທດ ແມ່ນ ຊັບສິນເປັນເງິນຕາຕ່າງປະເທດ ທີ່ປະກອບດ້ວຍ:

1. ເງິນຕາຕ່າງປະເທດ ທີ່ເປັນທະນະບັດ ແລະ ເງິນຫຼຽນ ຫຼື ເງິນຝາກໃນບັນຊີທະນາຄານຕ່າງປະເທດ ດ້ວຍສະກຸນເງິນແຂງໃດໜຶ່ງ ແລະ ຢູ່ໃນປະເທດໃດໜຶ່ງ ຕາມການຕົກລົງເຫັນດີຂອງສະພາບໍລິຫານ;

2. ສິດຖອນເງິນພິເສດນຳສະຖາບັນການເງິນສາກົນ ແລະ ເງິນສຳຮອງຂອງ ສປປ ລາວ ຢູ່ກອງທຶນສາກົນ;

3. ຄຳ ທີ່ທະນາຄານແຫ່ງ ສປປ ລາວ ຄຸ້ມຄອງ;

4. ພັນທະບັດລັດຖະບານ ແລະ ພັນທະບັດອື່ນ ທີ່ອອກຈຳໜ່າຍ ຫຼື ຄ້ຳປະກັນໂດຍລັດຖະບານຕ່າງປະເທດ ຫຼື ສະຖາບັນການເງິນສາກົນ ເປັນເງິນຕາຕ່າງປະເທດສະກຸນໃດໜຶ່ງ ຕາມການຕົກລົງເຫັນດີຂອງສະພາບໍລິຫານ.

**ມາດຕາ 51 (ໃໝ່) ການຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດ ໃຫ້ມີຄວາມປອດໄພ ແລະ ຄ່ອງຕົວ ເພື່ອຮັບປະກັນການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ແລະ ຄວາມສາມາດໃນການຊຳລະກັບຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ. ໃນການບໍລິຫານຄັງສຳຮອງເງິນຕາຕ່າງປະເທດ ທະນາຄານແຫ່ງ ສປປ ລາວ ສາມາດ ຊື້, ຂາຍ ຊັບສິນຕ່າງໆ ທີ່ເປັນອົງປະກອບຂອງຄັງສຳຮອງເງິນຕາຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 50 ຂອງກົດໝາຍສະບັບນີ້.

ທະນາຄານແຫ່ງ ສປປ ລາວ ຕ້ອງລາຍງານສະພາບຄັງສຳຮອງເງິນຕາຕ່າງປະເທດໃຫ້ລັດຖະບານ. ເມື່ອເຫັນວ່າຄັງສຳຮອງເງິນຕາຕ່າງປະເທດຫຼຸດລົງ ຫຼື ມີທ່າອ່ຽງຫຼຸດລົງຜິດປົກກະຕິ ທະນາຄານແຫ່ງ ສປປ ລາວ ຕ້ອງລາຍງານໃຫ້ລັດຖະບານໂດຍດ່ວນ ພ້ອມທັງສະເໜີມາດຕະການທີ່ຈຳເປັນ ເພື່ອແກ້ໄຂສະພາບການດັ່ງກ່າວ ແລະ ສືບຕໍ່ລາຍງານຈົນກວ່າສະພາບການຈະກັບຄືນສູ່ປົກກະຕິ.

## ໝວດທີ 3
## ການຄຸ້ມຄອງສະຖາບັນການເງິນ ແລະ ລະບົບການຊໍາລະ

**ມາດຕາ 52 (ໃໝ່) ການຄຸ້ມຄອງສະຖາບັນການເງິນ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງສະຖາບັນການເງິນ ໂດຍກໍານົດຍຸດທະສາດ, ແຜນການ, ແຜນງານ, ນິຕິກໍາ ແລະ ກົງຈັກການຈັດຕັ້ງ ທີ່ເໝາະສົມ ຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ເພື່ອເຮັດໜ້າທີ່ໃນການຄຸ້ມຄອງ ແລະ ກວດກາສະຖາບັນການເງິນ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ຊົມໃຊ້ທາງດ້ານການເງິນ ແລະ ຮັບປະກັນໃຫ້ສະຖາບັນການເງິນ ມີຄວາມໝັ້ນຄົງ, ດໍາເນີນທຸລະກິດມີຄວາມໂປ່ງໃສ ແລະ ສອດຄ່ອງກັບກົດໝາຍ.

**ມາດຕາ 53 (ໃໝ່) ການຄຸ້ມຄອງລະບົບການຊໍາລະ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງ ແລະ ພັດທະນາລະບົບການຊໍາລະ ດ້ວຍການກໍານົດຍຸດທະສາດ, ວາງນະໂຍບາຍ, ສ້າງ ແລະ ປັບປຸງ ນິຕິກໍາ, ສ້າງເຄື່ອງມືຊໍາລະ ໃນຂອບເຂດທີ່ຕົນຮັບຜິດຊອບ, ກໍານົດ ບັນດາຫຼັກການ, ມາດຕະຖານທາງດ້ານເຕັກນິກ ກ່ຽວກັບການຊໍາລະ ລວມທັງກົນໄກການໄລ່ລຽງ ແລະ ການຫັກບັນຊີ ໃຫ້ບັນດາສະຖາບັນການເງິນ ແລະ ນິຕິບຸກຄົນອື່ນ ທີ່ດໍາເນີນທຸລະກິດການຊໍາລະ.

**ມາດຕາ 54 (ໃໝ່) ວິທີການຄຸ້ມຄອງສະຖາບັນການເງິນ ແລະ ລະບົບການຊໍາລະ**

ທະນາຄານແຫ່ງ ສປປ ລາວ ດໍາເນີນການຄຸ້ມຄອງ, ກວດກາການເຄື່ອນໄຫວຂອງສະຖາບັນການເງິນ ແລະ ລະບົບການຊໍາລະ ຕາມກົດໝາຍ ແລະ ລະບຽບການ ເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບທາງດ້ານການເງິນ. ຖ້າຫາກພົບເຫັນການລະເມີດແລ້ວ ທະນາຄານແຫ່ງ ສປປ ລາວ ຕ້ອງນໍາໃຊ້ມາດຕະການ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

# ພາກທີ V
# ທຶນສ້າງຕັ້ງ, ການເງິນ ແລະ ການບັນຊີ

**ມາດຕາ 55 (ປັບປຸງ) ທຶນສ້າງຕັ້ງ**

ທະນາຄານແຫ່ງ ສປປ ລາວ ມີທຶນສ້າງຕັ້ງ ໂດຍແມ່ນລັດຖະບານເປັນຜູ້ປະກອບໃຫ້ ແລະ ເປັນເຈົ້າຂອງທຶນແຕ່ພຽງຜູ້ດຽວ. ການປ່ຽນແປງທຶນສ້າງຕັ້ງແຕ່ລະໄລຍະ ແມ່ນລັດຖະບານເປັນຜູ້ກໍານົດ.

**ມາດຕາ 56 (ໃໝ່) ການເງິນ**

ທະນາຄານແຫ່ງ ສປປ ລາວ ເປັນເຈົ້າຕົນເອງທາງດ້ານການເງິນ ໂດຍບໍ່ຂຶ້ນກັບງົບປະມານແຫ່ງລັດ ຊຶ່ງປະກອບດ້ວຍ ລາຍຮັບ, ລາຍຈ່າຍ ລວມທັງການລົງທຶນກໍ່ສ້າງໂຄງລ່າງພື້ນຖານ ແລະ ປະກອບວັດຖຸເຕັກນິກ ແລະ ຄັງຕ່າງໆ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຂອງຕົນ.

ແຜນລາຍຮັບ, ລາຍຈ່າຍ ປະຈໍາປີ ຂອງທະນາຄານແຫ່ງ ສປປ ລາວ ຕ້ອງໄດ້ຮັບການຮັບຮອງຈາກສະພາບໍລິຫານ ແລະ ໄດ້ຮັບອະນຸມັດຈາກນາຍົກລັດຖະມົນຕີ.

**ມາດຕາ 57 (ໃໝ່) ລາຍຮັບ**

ລາຍຮັບຂອງທະນາຄານແຫ່ງ ສປປ ລາວ ປະກອບດ້ວຍ:

1. ດອກເບ້ຍ ແລະ ຜົນຕອບແທນຈາກການບໍລິຫານຊັບສິນ;
2. ຄ່າທໍານຽມ ແລະ ຄ່າບໍລິການ;
3. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

ລາຍຮັບທັງໝົດຂອງທະນາຄານແຫ່ງ ສປປ ລາວ ຕ້ອງຫັກລົບລາຍຈ່າຍ ເພື່ອຊອກຫາຜົນໄດ້ຮັບສຸດທິປະຈໍາປີ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 59 ຂອງກົດໝາຍສະບັບນີ້.

**ມາດຕາ 58 (ໃໝ່) ລາຍຈ່າຍ**

ລາຍຈ່າຍຂອງທະນາຄານແຫ່ງ ສປປ ລາວ ປະກອບດ້ວຍ:

1. ລາຍຈ່າຍປະຕິບັດນະໂຍບາຍເງິນຕາ ລວມທັງ ລາຍຈ່າຍໃນການພິມທະນະບັດ ແລະ ຫຼໍ່ເງິນຫຼຽນ;
2. ດອກເບ້ຍ;
3. ຄ່າທໍານຽມ ແລະ ຄ່າບໍລິການ;
4. ລາຍຈ່າຍບໍລິຫານ;
5. ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າຊັບສິນ;
6. ລາຍຈ່າຍອື່ນ.

**ມາດຕາ 59 (ປັບປຸງ) ຜົນໄດ້ຮັບສຸດທິປະຈໍາປີ**

ຜົນໄດ້ຮັບສຸດທິປະຈໍາປີ ຂອງທະນາຄານແຫ່ງ ສປປ ລາວ ແມ່ນສ່ວນຜິດດ່ຽງ ທີ່ໄດ້ມາຈາກລາຍຮັບລົບລາຍຈ່າຍ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 57 ແລະ 58 ຂອງກົດໝາຍສະບັບນີ້.

ກໍລະນີຜົນໄດ້ຮັບສຸດທິປະຈໍາປີເປັນບວກ ສະພາບໍລິຫານ ຕ້ອງຈັດແບ່ງຕາມບູລິມະສິດ ດັ່ງນີ້:

1. ເຂົ້າຄັງຂະຫຍາຍການຜະລິດ ຢ່າງໜ້ອຍ ຊາວ ສ່ວນຮ້ອຍ;
2. ເຂົ້າຄັງສໍາຮອງທົ່ວໄປ ຢ່າງໜ້ອຍ ສາມສິບ ສ່ວນຮ້ອຍ;
3. ແກ້ໄຂການຂາດທຶນສະສົມ ໃນປີຜ່ານມາ;
4. ມອບເຂົ້າງົບປະມານແຫ່ງລັດ.

**ມາດຕາ 60 (ປັບປຸງ) ຄັງຂະຫຍາຍການຜະລິດ**

ຄັງຂະຫຍາຍການຜະລິດ ແມ່ນ ຄັງທີ່ສະສົມໄວ້ ຊຶ່ງໄດ້ຈາກການຈັດສັນຜົນໄດ້ຮັບສຸດທິປະຈໍາປີ ເພື່ອເປັນແຫຼ່ງທຶນສໍາລັບການລົງທຶນກໍ່ສ້າງໂຄງລ່າງພື້ນຖານ ແລະ ປະກອບວັດຖຸເຕັກນິກ ໃນການກໍ່ສ້າງ ແລະ ປັບປຸງ ສໍານັກງານ, ຫ້ອງການ, ລະບົບເຕັກໂນໂລຊີ ຂໍ້ມູນ ຂ່າວສານ, ພາຫະນະ ແລະ ອຸປະກອນຮັບໃຊ້ວຽກງານວິຊາການ.

### ມາດຕາ 61 (ປັບປຸງ) ຄັງສຳຮອງທົ່ວໄປ

ຄັງສຳຮອງທົ່ວໄປ ແມ່ນ ຄັງທີ່ສ້າງຂຶ້ນໄວ້ ເພື່ອທົດແທນການຂາດທຶນ ຈາກການປະຕິບັດນະໂຍບາຍເງິນຕາ ຕາມແຜນເງິນຕາແຫ່ງຊາດ. ກໍລະນີທີ່ຄັງສຳຮອງທົ່ວໄປບໍ່ພຽງພໍ ລັດຖະບານຕ້ອງອອກພັນທະບັດທີ່ປ່ຽນມືບໍ່ໄດ້ທົດແທນໃຫ້.

ຄັງສຳຮອງທົ່ວໄປ ສ້າງຂຶ້ນຈາກຜົນໄດ້ຮັບສຸດທິປະຈຳປີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 59 ຂອງກົດໝາຍສະບັບນີ້.

### ມາດຕາ 62 (ປັບປຸງ) ບັນຊີຄັງສຳຮອງພິເສດ

ບັນຊີຄັງສຳຮອງພິເສດ ແມ່ນ ບັນຊີໜຶ່ງ ທີ່ນອນໃນໂຄງປະກອບຂອງບັນຊີທຶນ, ໃຊ້ບັນທຶກສ່ວນຜິດດ່ຽງ ຊຶ່ງເກີດຈາກການປ່ຽນແປງມູນຄ່າຊັບສິນ ແລະ ໜີ້ສິນ ຍ້ອນການເໜັງຕີງຂອງລາຄາ ແລະ ອັດຕາແລກປ່ຽນ.

ສ່ວນຜິດດ່ຽງໃນວັກໜຶ່ງຂອງມາດຕານີ້ ບໍ່ຖືກຄິດໄລ່ເຂົ້າໃນຜົນໄດ້ຮັບປະຈຳປີຂອງທະນາຄານແຫ່ງ ສປປ ລາວ.

### ມາດຕາ 63 (ໃໝ່) ຫຼັກການບັນຊີ

ທະນາຄານແຫ່ງ ສປປ ລາວ ປະຕິບັດວຽກງານການບັນຊີ ຕາມຫຼັກການບັນຊີທີ່ຖືກຍອມຮັບໂດຍທົ່ວໄປ ແລະ ໝູນໃຊ້ມາດຕະຖານສາກົນດ້ານການລາຍງານການເງິນ ໃຫ້ສອດຄ່ອງ ແລະ ເໝາະສົມ ກັບພາລະບົດບາດຂອງທະນາຄານແຫ່ງ ສປປ ລາວ.

### ມາດຕາ 64 (ປັບປຸງ) ປີການບັນຊີ

ປີການບັນຊີຂອງທະນາຄານແຫ່ງ ສປປ ລາວ ເລີ່ມຕົ້ນໃນວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ ຂອງແຕ່ລະປີ.

### ມາດຕາ 65 (ໃໝ່) ເອກະສານລາຍງານການເງິນ

ທະນາຄານແຫ່ງ ສປປ ລາວ ຕ້ອງສ້າງເອກະສານລາຍງານການເງິນປະຈຳ ເດືອນ, ງວດ ແລະ ປີ. ເອກະສານລາຍງານການເງິນ ປະກອບດ້ວຍ ບົດລາຍງານຖານະການເງິນ, ບົດລາຍງານຜົນການດຳເນີນງານ, ບົດອະທິບາຍຊ້ອນທ້າຍ ແລະ ເອກະສານອື່ນໆ ຕາມການກຳນົດຂອງສະພາບໍລິຫານ. ບົດລາຍງານການເງິນປະຈຳປີ ຕ້ອງລາຍງານໃຫ້ລັດຖະບານຊາບ ພາຍຫຼັງໄດ້ຮັບການກວດສອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 71 ຂອງກົດໝາຍສະບັບນີ້.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 66 (ໃໝ່) ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ລະດົມທຶນ ແລະ ດຳເນີນທຸລະກິດ ການເງິນ, ການທະນາຄານ ໂດຍບໍ່ໄດ້ຮັບອະນຸຍາດ;
2. ເອົາຊື່ຂອງທະນາຄານແຫ່ງ ສປປ ລາວ ໄປນຳໃຊ້ເພື່ອຜົນປະໂຫຍດຂອງຕົນ;
3. ຂັດຂວາງ, ປະຕິເສດການຮ່ວມການມື ກັບເຈົ້າໜ້າທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານການເງິນ, ເງິນຕາ;
4. ສະໜອງຂໍ້ມູນ ຂ່າວສານໃຫ້ແກ່ທະນາຄານແຫ່ງ ສປປ ລາວ ໂດຍບໍ່ຖືກຕ້ອງຕາມຄວາມເປັນຈິງ;
5. ນຳເອົາທະນະບັດ ແລະ/ຫຼື ເງິນຫຼຽນ ໄປຂາຍເພື່ອເກງກຳໄລ;
6. ປອມແປງ, ທຳລາຍ ທະນະບັດ ແລະ/ຫຼື ເງິນຫຼຽນ ແລະ ນຳໃຊ້ເງິນປອມ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 67 (ໃໝ່) ຂໍ້ຫ້າມສຳລັບທະນາຄານແຫ່ງ ສປປ ລາວ ແລະ ພະນັກງານ**

ຫ້າມທະນາຄານແຫ່ງ ສປປ ລາວ ລົງທຶນສ້າງຕັ້ງວິສາຫະກິດໂດຍກົງ, ຮ່ວມທຶນ ຫຼື ຖືຮຸ້ນ ໃນວິສາຫະກິດໃດໜຶ່ງ.

ຫ້າມພະນັກງານຂອງທະນາຄານແຫ່ງ ສປປ ລາວ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ ຫຼື ເປັນພະນັກງານ ໃນຫົວໜ່ວຍທຸລະກິດທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;
2. ເປີດເຜີຍຂໍ້ມູນ ທີ່ເປັນຄວາມລັບຂອງທະນາຄານແຫ່ງ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສວຍໃຊ້ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ ແລະ/ຫຼື ໝູ່ຄະນະ;
4. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ແລະ ລໍ້າລາດບັງຫຼວງ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດຕາມກົດໝາຍ.

## ພາກທີ VII
## ການກວດກາ

**ມາດຕາ 68 (ໃໝ່) ອົງການກວດກາ**

ອົງການກວດກາ ທະນາຄານແຫ່ງ ສປປ ລາວ ປະກອບດ້ວຍ:

1. ອົງການກວດກາພາຍໃນ ປະກອບດ້ວຍ ຄະນະກຳມະການກວດກາ ແລະ ກົມກວດກາພາຍໃນ ຂອງທະນາຄານແຫ່ງ ສປປ ລາວ;

2. ອົງການກວດກາພາຍນອກ ປະກອບດ້ວຍ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາລັດຖະບານ.

**ມາດຕາ 69 (ໃໝ່) ເນື້ອໃນກວດກາ**

ການກວດກາການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ການຈັດຕັ້ງປະຕິບັດພາລະບົດບາດ ແລະ ປະສິດທິຜົນຂອງວຽກງານ;
3. ເອກະສານລາຍງານການເງິນ;
4. ເນື້ອໃນອື່ນ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 70 (ໃໝ່) ຮູບການການກວດກາ**

ການກວດກາວຽກງານທະນາຄານແຫ່ງ ສປປ ລາວ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;
2. ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮັບຊາບລ່ວງໜ້າ.

ໃນການດຳເນີນການກວດກາການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ຢ່າງເຂັ້ມງວດ.

**ມາດຕາ 71 (ປັບປຸງ) ການກວດກາເອກະສານລາຍງານການເງິນ**

ເອກະສານລາຍງານການເງິນ ປະຈຳ ເດືອນ, ງວດ ແລະ ປີ ຂອງທະນາຄານແຫ່ງ ສປປ ລາວ ຕ້ອງໄດ້ຮັບການກວດກາໂດຍອົງການກວດກາພາຍໃນຂອງທະນາຄານແຫ່ງ ສປປ ລາວ.

ເອກະສານລາຍງານການເງິນປະຈຳປີ ຕ້ອງໄດ້ຮັບການກວດກາ ແລະ ຢັ້ງຢືນ ຈາກຄະນະກຳມະການກວດກາຂອງທະນາຄານແຫ່ງ ສປປ ລາວ ແລະ ອົງການກວດສອບແຫ່ງລັດ ຢ່າງເປັນປົກກະຕິ.

**ມາດຕາ 72 (ປັບປຸງ) ການຮັກສາຄວາມລັບ**

ບຸກຄົນ ແລະ ການຈັດຕັ້ງ ທີ່ປະຕິບັດວຽກງານກວດກາພາຍໃນ, ກວດກາພາຍນອກ ແລະ ປະສານງານຕ່າງໆ ຕ້ອງຮັກສາຂໍ້ມູນທີ່ເປັນຄວາມລັບ ຂອງທະນາຄານແຫ່ງ ສປປ ລາວ ທີ່ຕົນໄດ້ຮູ້, ໄດ້ເຫັນ ແລະ ບໍ່ໃຫ້ເປີດເຜີຍ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

## ພາກທີ VIII
## ວັນສ້າງຕັ້ງ, ເຄື່ອງໝາຍ ແລະ ຕາປະທັບ

**ມາດຕາ 73 (ໃໝ່) ວັນສ້າງຕັ້ງທະນາຄານ**

ວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ແມ່ນ ວັນທີ 7 ຕຸລາ 1968 ແລະ ຖືເອົາວັນທີ 7 ຕຸລາ ຂອງທຸກໆປີ ເປັນວັນສະເຫຼີມສະຫຼອງຂອງຂະແໜງການທະນາຄານ ແລະ ສະຖາບັນການເງິນ.

**ມາດຕາ 74 (ໃໝ່) ເຄື່ອງໝາຍ**

ທະນາຄານແຫ່ງ ສປປ ລາວ ມີເຄື່ອງໝາຍ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ.

**ມາດຕາ 75 (ໃໝ່) ຕາປະທັບ**

ທະນາຄານແຫ່ງ ສປປ ລາວ ມີຕາປະທັບ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 76 (ໃໝ່) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 77 (ໃໝ່) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 78 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 79 (ປັບປຸງ) ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1995 ແລະ ກົດໝາຍວ່າດ້ວຍການດັດແປງກົດໝາຍ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້